

# E-9ແຮງງານຕ່າງປະເທດ
# ການແນະນຳກ່ຽວກັບອຸບັດຕິເຫດແລ້ວເສຍຊີວິດ
# ແລະ ການສະໜັບສະໜູນໃນການຈັດງານສົບ

*ການແນະນຳນີ້ອະທິບາຍກ່ຽວກັບລະບົບຂອງການເສຍຊີວິດຂອງແຮງງານຕ່າງປະເທດເຊິ່ງເສຍຊີວິດໃນລະຫວ່າງທີ່ພັກຢູ່ເກົາຫຼີຊົ່ວຄາວ, ຂັ້ນຕອນຈັດງານສົບ ແລະ ການສະໜັບສະໜູນຄ່າໃຊ້ຈ່າຍໃນງານສົບ*

## 1 ລາຍງານອຸບັດຕິເຫດ

**ຫົວໜ້າສະຖານນີຕຳຫຼວດ • ສູນການຈ້າງງານ • ສະຖານທູດຂອງປະເທດທີ່ສິ່ງຢູ່ເກົາຫຼີ**

- **ນາຍຈ້າງ**
  ເມື່ອແຮງງານຕ່າງປະເທດເສຍຊີວິດ ນາຍຈ້າງຕ້ອງລາຍງານການເສຍຊີວິດຢູ່ສະຖານນີຕຳຫຼວດ ຫຼື ຢູ່ສູນການຈ້າງງານ.
- **ສະຖານສະຖານນີຕຳຫຼວດ ແລະ ສູນການຈ້າງງານ**
  ແຈ້ງການເສຍຊີວິດໃຫ້ສະຖານທູດຂອງປະເທດທີ່ສິ່ງຢູ່ເກົາຫຼີ ແລະ ດຳເນີນການຕາມຂັ້ນຕອນທີ່ຈຳເປັນເຊັ່ນ ການເດີນທາງມາຮອດຂອງຄອບຄົວຜູ້ເສຍຊີວິດ ຫຼື ຕົວແທນ (ອົງການຈັດຕັ້ງສຳລັບແຮງງານຂ້າມຊາດ ແລະ ອື່ນໆ)

## 2 ການລົງກວດສອບສະຖານທີ່ຕົວຈິງ

**ລາຍລະອຽດ, ສາເຫດຂອງອຸບັດຕິເຫດ • ຄຳໃຫ້ການຂອງພະຍານ**

- ສະຖານນີຕຳຫຼວດແຈ້ງໃຫ້ນາຍຈ້າງ ແລະ ສະຖານທູດຂອງປະເທດທີ່ສິ່ງຢູ່ເກົາຫຼີ (ຄອບຄົວຜູ້ເສຍຊີວິດ) ຮູ້ກ່ຽວກັບຜົນຂອງການສືບສວນ ແລະ ສູນການຈ້າງງານຈະແຈ້ງໃຫ້ໜ່ວຍງານທີ່ກ່ຽວຂ້ອງ.

| ປະເພດ | ປະທານອົງການຈັດຕັ້ງ | ສະຖານະປະຈຸບັນຂອງການສະໜັບສະໜູນ |
|---|---|---|
| ອຸບັດຕິເຫດຈາກອຸດສາຫະກຳ | ບໍລິການໃຫ້ຄ່າຊົດເຊີຍ ແລະ ສະຫວັດດີການ ຂອງແຮງງານເກົາຫຼີ | ການຈ່າຍຄ່າປະກັນໄພຊົດເຊີຍຂອງແຮງງານເກົາຫຼີ (ຄ່າແຮງງານສະເລ່ຍ 1,300ວັນ) |
| ອຸບັດຕິເຫດຈາກການບາດເຈັບ | ຊຳຊອງຮວາແຈ | ຈ່າຍຄ່າຊົດເຊີຍກໍລະນີເສຍຊີວິດຍ້ອນອຸບັດຕິເຫດ (ສູງສຸດ 3 ລ້ານວອນ) |
| ອຸບັດຕິເຫດຈາກພະຍາດ | ຊຳຊອງຮວາແຈ | ຈ່າຍຄ່າຊົດເຊີຍກໍລະນີເສຍຊີວິດຍ້ອນພະຍາດ (ສູງສຸດ 15 ລ້ານວອນ) |
| ການຂ້າຕົວຕາຍ· ເກີດອຸບັດຕິແລ້ວເສຍຊີວິດ | ສະຖານທູດຂອງປະເທດທີ່ສົ່ງໃນເກົາຫຼີ | (ຈັດງານສົບຢູ່ບ້ານ) ດຳເນີນຂັ້ນຕອນການຈັດງານສົບ (ການບໍລິການພັດທະນາຊັບພະຍາກອນມະນຸດຂອງເກົາຫຼີ) ໃບແຈ້ງລາຄາສຳລັບຄ່າໃຊ້ຈ່າຍຂອງການຈັດງານສົບ * ລວມທັງເອກະສານທີ່ເປັນຫຼັກຖານ |
| | ການບໍລິການພັດທະນາຊັບພະຍາກອນມະນຸດຂອງເກົາຫຼີ | ຫັກຄ່າໃຊ້ຈ່າຍອອກຈາກໃບແຈ້ງລາຄາ (ຈ່າຍເງິນພາຍໃນ 14 ວັນເປັນຈຳນວນເງິນສູງສຸດເຖິງ 3 ລ້ານວອນ) |

## 3 ຂັ້ນຕອນການຈັດງານສົບ

**ການປຶກສາກັບຄອບຄົວຜູ້ເສຍຊີວິດ • ຈູດ, ເກັບຊັບສິ່ງຂອງ ແລະ ກະດູກຄົນຕາຍ • ການສົ່ງແຮງງານຕ່າງປະເທດທີ່ເສຍຊີວິດກັບປະເທດ ແລະ ອື່ນໆ**

- ສະຖານທູດຂອງປະເທດທີ່ສົ່ງຢູ່ເກົາຫຼີ (ຫຼື ອົງການທີ່ໄດ້ຮັບມອບໝາຍ) ໄດ້ຮັບຄຳຮ້ອງຂໍ ຫຼື ສົ່ງສົບຜູ້ເສຍຊີວິດ ຈາກຄອບຄົວຂອງຜູ້ເສຍຊີວິດລວມທັງສ່ວນທີ່ເຫຼືອຂອງຜູ້ເສຍຊີວິດໂດຍຜ່ານບ້ານທີ່ຈັດງານສົບໃນເກົາຫຼີຕາມຄວາມຕ້ອງການຂອງຄອບຄົວຜູ້ເສຍຊີວິດ.

ຖ້າຄອບຄົວຜູ້ເສຍຊີວິດພົບວ່າມີຄວາມຫຍຸ້ງຍາກໃນການກະກຽມຄ່າໃຊ້ຈ່າຍທີ່ເກີດອຸບັດຕິເຫດ (ຈັດງານສົບ) ແມ່ນໃຊ້ມາດຕະຖານການສະໜັບສະໜູນທາງການເງິນຕາມສະຖານທູດຂອງປະເທດທີ່ສົ່ງຢູ່ເກົາຫຼີ

- ຈັດງານສົບ (ປະມານ 2 ລ້ານວອນ)
- ຈູດ (1ແສນວອນ - 1ລ້ານວອນ)
- ໃສ່ຢາສົບ (2,500,000ວອນ - 5,000,000 ລ້ານວອນ)
- ສົ່ງກະດູກກັບປະເທດ (400,000 ວອນ - 1ລ້ານວອນ)
- ສົ່ງສົບກັບຄືນປະເທດ (600,000 ວອນ - 1,500,000 ວອນ)

## 4 ການຈ່າຍຄ່າປະກັນໄພ ແລະ ຄ່າແຮງງານ

**ຄ່າແຮງງານ • ແຮງງານຕ່າງປະເທດ ປະກັນໄພສຳລັບແຮງງານຕ່າງປະເທດເທົ່ານັ້ນ**

- ຄ່າປະກັນໄພຈ່າຍຕາມປະເພດຂອງການເສຍຊີວິດ ໂດຍສະຖາບັນທີ່ກ່ຽວຂ້ອງ ແລະ ຄ່າແຮງງານອື່ນໆ, ປະກັນໄພຄ່າໃຊ້ຈ່າຍການກັບຄືນ, ປະກັນໄພການເດີນທາງ, ຈະໄດ້ຮັບເງິນບຳນານແຫ່ງຊາດ (ຖ້າລົງທະບຽນ)

ຄຳຮ້ອງຂໍສຳລັບເອົາຄ່າປະກັນໄພ: ນາຍຈ້າງ, ສະຖານທູດຂອງປະເທດທີ່ສົ່ງຢູ່ເກົາຫຼີ, ຄອບຄົວຜູ້ເສຍຊີວິດ (ຫຼື ອົງການຈັດຕັ້ງທີ່ໄດ້ຮັບມອບໝາຍໂດຍຄອບຄົວຜູ້ເສຍຊີວິດ) ແລະ ອື່ນໆ

- ປະກັນໄພຮັບປະກັນການເດີນທາງ (ເດີນທາງ 1 ປີນັບແຕ່ມື້ລົງທະບຽນ)
- ປະກັນໄພຄ່າໃຊ້ຈ່າຍເວລາກັບປະເທດ (ຈຳກັດ 4 – 6 ລ້ານວອນຕໍ່ປະເທດ)
- ປະກັນໄພຮັບປະກັນ (ຈຳກັດ 2 ລ້ານວອນ ເມື່ອບໍ່ຈ່າຍຄ່າແຮງງານ)
- ຄ່າແຮງງານ (ຄ່າແຮງງານຄິດໄລ່ຕາມໄລຍະເວລາການຈ້າງງານ)
- ເງິນບຳນານແຫ່ງຊາດ (ຖ້າລົງທະບຽນ)

고용노동부
한국산업인력공단
HUMAN RESOURCES DEVELOPMENT SERVICE OF KOREA



# ສະໜັບສະໜູນຄ່າໃຊ້ຈ່າຍໃນການຈັດ ງານສົບສຳລັບຜູ້ທີ່ບໍ່ມີຖິ່ນຖານ · ຂ້າຕົວຕາຍ

## ພາບລວມຂອງໂຄງການ

- ລະບົບນີ້ໃຫ້ຄ່າໃຊ້ຈ່າຍສຳລັບການຈັດງານສົບຂອງແຮງງານຕ່າງປະເທດທີ່ເກີດອຸບັດຕິເຫດແລ້ວເສຍຊີວິດໂດຍບໍ່ມີຄອບຄົບ / ໝູ່ເພື່ອນ ຫຼື ຂ້າຕົວຕາຍໃນເວລາທີ່ຢູ່ເກົາຫຼີ ແລະ ຄ່າໃຊ້ຈ່າຍຕົວຈິງສູງສຸດແມ່ນ 3 ລ້ານວອນ.

## ການສະໜັບສະໜູນ

- E-9 ແຮງງານຕ່າງປະເທດຜູ້ທີ່ປະສົບອຸບັດຕິເຫດຮ້າຍແຮງ ຫຼື ຂ້າຕົວຕາຍທີ່ບໍ່ມີຄອບຄົວ / ໝູ່ເພື່ອນ

## ຄ່າໃຊ້ຈ່າຍທີ່ກຳນົດໄວ້ໃຫ້

- ສູງເຖິງ 3 ລ້ານວອນ

* ການສະໜັບສະໜູນຈະມີໃຫ້ສຳລັບຄ່າໃຊ້ຈ່າຍໃນການຈັດງານສົບຕົວຈິງເຊັ່ນ ຈູດ, ຕົບແຕ່ງ ແລະ ສົ່ງສົບຜູ້ເສຍຊີວິດກັບຄືນປະເທດ, ແຕ່ອາດຈະມອບໃຫ້ສູງເຖິງ 3 ລ້ານວອນ.

## ການສະໝັກ ແລະ ການຈ່າຍເງິນຂອງກອງທຶນສະໜັບສະໜູນ

- ການຮັບ: ການບໍລິການພັດທະນາຊັບພະຍາກອນມະນຸດຂອງເກົາຫຼີ ແລະ ກອງທຶນສະໜັບສະໜູນທີ່ຢູ່ອາໄສ
- ສະຖານບັນສະໝັກ: ສະຖານທູດຂອງປະເທດທີ່ສົ່ງຢູ່ເກົາຫຼີ

ຫຼັງຈາກ ດຳເນີນການຈັດງານສົບຮຽບຮ້ອຍແລ້ວ, ໃຫ້ຄັດຕິດຄຳຮ້ອງຂໍເງິນສະໜັບສະໜູນສຳລັບການຈັດງານສົບ ແລະ ປະກອບເອກະສານຫຼັກຖານໃຫ້ສູນບໍລິການພັດທະນາຊັບພະຍາກອນມະນຸດຂອງປະເທດເກົາຫຼີ.

## ເອກະສານທີ່ຕ້ອງຍື່ນສະເໜີ

- ຄ່າໃຊ້ຈ່າຍໃນງານສົບ

  ແບບຟອມຄຳຮ້ອງຂໍຮັບເງິນສະໜັບສະໜູນໃນການຈັດງານສົບ, ໃບຢັ້ງຢືນເສຍຊີວິດ ຫຼື ໃບຢັ້ງຢືນການສັນນິສູດ, ໃບຮັບເງິນສຳລັບການຈັດງານສົບ, ສຳເນົາປຶ້ມບັນຊີເງິນຝາກ (ຖ້າຈ່າຍໂດຍສະຖານທູດຂອງປະເທດທີ່ສົ່ງໃນເກົາຫຼີ), ສຳເນົາໃບອະນຸຍາດປະກອບທຸລະກິດ ຈັດງານສົບ ແລະ ປຶ້ມບັນຊີເງິນຝາກ (ຖ້າຈ່າຍເງິນໂດຍບໍລິສັດຈັດງານສົບ)

- ການສົ່ງສົບກັບຄືນປະເທດ

  ແບບຟອມຄຳຮ້ອງຂໍຮັບເງິນສະໜັບສະໜູນໃນການຈັດງານສົບ, ເອກະສານຫຼັກຖານສຳລັບການເດີນທາງຂອງຜູ້ເສຍຊີວິດ (ຫຼື ແຜນການເດີນທາງ), ເອກະສານຢັ້ງຢືນຂອງການຈັດງານສົບ.

## ຂໍ້ມູນການຕິດຕໍ່ຂອງສະຖາບັນທີ່ກ່ຽວຂ້ອງ

| ສະຖາບັນ | ລັກສະນະ | ຕິດຕໍ່ |
|---|---|---|
| ສູນການຈ້າງງານ | ຢັ້ງຢືນອຸບັດຕິເຫດທາງອຸດສາຫະກຳ | ☎ 1350 |
| ການບໍລິການຄ່າແຮງງານ ແລະ ສະຫວັດດີການຂອງແຮງງານເກົາຫຼີ | ຈ່າຍເງິນປະກັນໄພອຸບັດຕິເຫດທາງອຸດສາຫະກຳ | ☎ 1588 - 0075 |
| ການບໍລິການເງິນບຳນານແຫ່ງຊາດ | ຈ່າຍເງິນບຳນານແຫ່ງຊາດ | ☎ 1355 |
| ບໍລິສັດ ປະກັນໄພ ຊຳຊອງຮວາແຈ | ຈ່າຍເງິນປະກັນໄພການເດີນທາງ · ປະກັນໄພ ແລະ ການກັບຄືນປະເທດ | ☎ 02 - 2261 - 8400 |
| ສູນໃຫ້ຄຳປຶກສາແຮງງານຕ່າງປະເທດ | ບໍລິການໃຫ້ຄຳປຶກສາ · ແປໄດ້ຫຼາຍພາສາ<br>ແນະນຳການຮັບການສະໜັບສະໜູນ<br>ຄ່າໃຊ້ຈ່າຍໃນການຈັດງານສົບຂອງຄົນງານທີ່ຂ້າຕົວຕາຍ | ☎ 1577 - 0071 |



고용노동부 한국산업인력공단 HUMAN RESOURCES DEVELOPMENT SERVICE OF KOREA